ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

0003

ເລກທີ:........................./ສອປ

ນະຄອນຫຼວງວຽງຈັນ, ວັນທີ: 05 JAN 2024

# ແຈ້ງການ

**ເຖິງ:** ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

ທ່ານ ຄະນະບໍດີ ຄະນະທັນຕະແພດສາດ

**ເລື່ອງ:** ການກະກຽມ ແລະ ຈັດຕັ້ງປະຕິບັດການສອບເສັງລະດັບຊາດ ສຳລັບທັນຕະແພດ ຄັ້ງທີ 4.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ເລກທີ 2233/ສທ, ລົງວັນທີ 03 ສິງຫາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດການສອບເສັງລະດັບຊາດ ສຳລັບວິຊາຊີບທັນຕະແພດຄັ້ງທີ 0002 ເລກທີ /ສອປ, ລົງວັນທີ 04 ມັງກອນ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສຳລັບທັນຕະແພດ ຄັ້ງທີ 4 ເລກທີ 0132/ສອປ, ລົງວັນທີ 05 ຕຸລາ 2023.

ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບປິ່ນປົວຈະໄດ້ກະກຽມຈັດການສອບເສັງລະດັບຊາດ ສຳລັບທັນຕະແພດ ຄັ້ງທີ 4 ໃນວັນທີ 24 ກຸມພາ 2024 ສອບເສັງ MCQ ແລະ ວັນທີ 02 ມີນາ 2024 ສອບເສັງ OSCE, ເພື່ອເຮັດໃຫ້ການກະກຽມ ແລະ ຈັດຕັ້ງປະຕິບັດການສອບເສັງລະດັບຊາດຄັ້ງນີ້ ດຳເນີນໄປຕາມແຜນການ ແລະ ໄດ້ຮັບຜົນດີ ຈຶ່ງຂໍຄວາມຮ່ວມມືຊ່ວຍເຫຼືອມາຍັງທ່ານເພື່ອ:

1. ກະກຽມສະຖານທີ່ສອບເສັງ: ຫ້ອງສຳລັບກຳມະການຮັບຜິດຊອບການສອບເສັງ, ຕູ້ເກັບມ້ຽນຂໍ້ສອບເສັງ, ຫ້ອງສຳລັບສອບເສັງ;
2. ແຈ້ງໃຫ້ນັກສຶກສາທັນຕະແພດ ຈົບໃໝ່ປີ 2022-2023, ຜູ້ທີ່ບໍ່ມາສອບເສັງ ແລະ ຜູ້ທີ່ສອບເສັງບໍ່ຜ່ານໃນຄັ້ງທີ 3 ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງລະດັບຊາດ ຕາມວັນເວລາ ແລະ ສະຖານທີ່ ທີ່ກຳນົດໄວ້, ເຊິ່ງຈະໄດ້ເປີດຮັບສະໝັກ ແຕ່ວັນທີ 08 ມັງກອນ 2024 ແລະ ປິດຮັບສະໝັກການສອບເສັງໃນວັນທີ 19 ມັງກອນ 2024;
3. ແຈ້ງໃຫ້ນັກສອບເສັງ ກະກຽມອຸປະກອນທີ່ໃຊ້ໃນການສອບເສັງເຊັ່ນ: ບິກສີຟ້າ, ສໍດຳ 2B ແລະ ນ້ຳລຶບຂາວມາພ້ອມ;
4. ສຳລັບການເກັບຄ່າລົງທະບຽນສະໝັກສອບເສັງ ແມ່ນ 285,000 ກີບ/ຄົນ ແລະ ນຳໃຊ້ໃບບິນເກັບເງິນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລ້ວສັງລວມສົ່ງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ (ລາຍລະອຽດປະສານງານ ກັບ ນາງ ວົງເດືອນ ສະຫວັນສັກ ເບີໂທ: 020 96624956 ຜູ້ຮັບຜິດຊອບວຽກງານການເງິນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການຂ້າງເທິງນີ້ດ້ວຍ.

ເຊັນແທນ ປະທານ

ສຈ ດຣ ຈັນພັງ ທຳມະວົງ

**ຕິດຕໍ່ປະສານງານ ໄທ ແລະ ອອດແອບ:**

ນາງ ວົງເດືອນ ສະຫວັນສັກ 966 24 956

ທ້າວ ບຸນປະສິດ ຄຳກອງ 59 868 071

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ: 0002/ສອປ

ນະຄອນຫຼວງວຽງຈັນ, ວັນທີ: 04 JAN 2024

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດຈັດການສອບເສັງລະດັບຊາດ ສໍາລັບວິຊາຊີບທັນຕະແພດ ຄັ້ງທີ 4

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ເລກທີ 2233/ສທ, ລົງວັນທີ 03 ສິງຫາ 2022;
- ອີງຕາມ ຍຸດທະສາດວ່າດ້ວຍການອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສ ປ ປ ລາວ ແຕ່ປີ 2016-2025 ເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຄໍາແນະນໍາການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ເລກທີ 0108/ສອປ, ລົງວັນທີ 27 ພະຈິກ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກໍາມະການວິຊາຊີບປິ່ນປົວທັນຕະແພດ.

## ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

ມາດຕາ 1. ເຫັນດີອະນຸມັດໃຫ້ຄະນະກໍາມະການວິຊາຊີບປິ່ນປົວທັນຕະແພດ ສົມທົບກັບ ມະຫາວິທະຍາໄລວິທະຍາສາດສຸຂະພາບ, ຈັດຕັ້ງປະຕິບັດການສອບເສັງລະດັບຊາດ ສໍາລັບທັນຕະແພດ ຄັ້ງທີ 4 ປີ 2023, ດັ່ງມີລາຍລະອຽດລຸ່ມນີ້:

1) ວັນເວລາສອບເສັງ: 02 ວັນ:

- ວັນທີ 24 ກຸມພາ 2023 (ວັນເສົາ), ເວລາ 8:00-16:00 ໂມງ ສໍາລັບ MCQ.

ສະຖານທີ່ຈັດການສອບເສັງ: ຄະນະເພສັຊສາດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ;

- ວັນທີ 03 ມີນາ 2023 (ວັນເສົາ), ເວລາ 8:00-12:00 ໂມງ ສໍາລັບ OSCE.

ສະຖານທີ່ຈັດການສອບເສັງ: ຄະນະທັນຕະແພດສາດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ;

2) ສູນປະສານງານກ່ຽວກັບການສອບເສັງລະດັບຊາດ: ສະພາຄຸ້ມຄອງວິຊາຊີບປິ່ນປົວ ນະຄອນຫຼວງວຽງຈັນ

3) ວິຊາສອບເສັງ: 5 ວິຊາ.

ມາດຕາ 2. ງົບປະມານໃຊ້ຈ່າຍເຂົ້າໃນການສອບເສັງລະດັບຊາດຄັ້ງນີ້ ແມ່ນນໍາໃຊ້ເງິນທີ່ເກັບຈາກຄ່າລົງທະບຽນສະໝັກສອບເສັງຂອງນັກສອບເສັງ.

ມາດຕາ 3. ພາຍຫຼັງສໍາເລັດການສອບເສັງແລ້ວໃຫ້ບອດທັນຕະແພດ ສະຫຼຸບລາຍງານຜົນໄດ້ຮັບໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ ພາຍໃນ 10 ວັນ ລັດຖະການ.

ມາດຕາ 4. ໃຫ້ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວທັນຕະແພດ, ກົມຈັດຕັ້ງ ແລະ ພະນັກງານ, ຄະນະທັນຕະແພດສາດ ມວສ, ບັນດາການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຕາມຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ປະທານ

ສຈ ດຣ ຈັນພັງ ທຳມະວົງ

ບ່ອນນຳສົ່ງ :

1. ປະທານ, ຮອງປະທານ ສວປ ຜູ້ລະ 01 ສະບັບ
2. ບອດທັນຕະແພດ 01 ສະບັບ
3. ພາກສ່ວນກ່ຽວຂ້ອງບ່ອນລະ 01 ສະບັບ
4. ຫ້ອງການ ສວປ ເກັບຮັກສາໄວ້ 01 ສະບັບ